# ເວລາລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພທີ່ໄດ້ຮັບໃນ ວັນທີ 1 ມັງກອນ 2024

## ເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພແມ່ນຫຍັງ?

ເວລາລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພແມ່ນລາພັກທີ່ໄດ້ຮັບຄ່າຈ້າງທີ່ນາຍຈ້າງຕ້ອງມີໃຫ້ພະນັກງານໃນ Minnesota ທີ່ສາມາດນຳໃຊ້ສຳລັບເຫດຜົນບາງຢ່າງ, ລວມທັງເວລາທີ່ລູກຈ້າງເຈັບປ່ວຍ, ເບິ່ງແຍງສະມາຊິກໃນຄອບຄົວທີ່ເຈັບປ່ວຍ ຫຼື ຊອກຫາຄວາມຊ່ວຍເຫຼືອ ຖ້າພະນັກງານ ຫຼື ສະມາຊິກໃນຄອບຄົວຂອງພວກເຂົາໄດ້ປະສົບກັບການລ່ວງລະເມີດພາຍໃນຄອບຄົວ.



## ໃຜຈຶ່ງມີສິດໄດ້ຮັບ?

ພະນັກງານມີສິດໄດ້ຮັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພ ຖ້າພວກເຂົາ:

- ເຮັດວຽກຢ່າງໜ້ອຍ 80 ຊົ່ວໂມງຕໍ່ປີ ສຳລັບນາຍຈ້າງໃນ Minnesota; ແລະ
- ບໍ່ແມ່ນຜູ້ຮັບເໝົາທີ່ເປັນເອກະລາດ.

ພະນັກງານຊົ່ວຄາວ ແລະ ເຮັດວຽກບໍ່ເຕັມເວລາມີສິດໄດ້ຮັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພ. ຂໍ້ກຳນົດສຳລັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພຈະບໍ່ນຳໃຊ້ກັບພະນັກງານອຸດສາຫະກຳອາຄານ ແລະ ການກໍ່ສ້າງທີ່ເປັນຕົວແທນໂດຍອົງການແຮງງານການຄ້າອາຄານ ແລະ ການກໍ່ສ້າງ ຖ້າມີການຍົກເວັ້ນຂໍ້ກຳນົດເຫຼົ່ານີ້ຢ່າງຖືກຕ້ອງໃນຂໍ້ຕົກລົງການເຈລະຈາລວມ.

## ພະນັກງານສາມາດລາພັກໄດ້ນານເທົ່າໃດ?

ພະນັກງານໄດ້ຮັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພໜຶ່ງຊົ່ວໂມງ ລັບທຸກໆ 30 ຊົ່ວໂມງທີ່ໄດ້ເຮັດວຽກ ແລະ ສາມາດໄດ້ຮັບສູງສຸດປີລະ 48 ຊົ່ວໂມງ ເວັ້ນເສຍແຕ່ວ່ານາຍຈ້າງຕົກລົງເຫັນດີກັບຈຳນວນທີ່ສູງກວ່າ.

## ການລາພັກຕ້ອງຈ່າຍໃນອັດຕາເທົ່າໃດ?

ເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພຕ້ອງຈ່າຍໃນອັດຕາລາຍຊົ່ວໂມງດຽວກັນທີ່ພະນັກງານໄດ້ຮັບໃນເວລາທີ່ພວກເຂົາເຮັດວຽກ.

## ການລາພັກຖືກນຳໃຊ້ເພື່ອຫຍັງ?

ພະນັກງານສາມາດໃຊ້ເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພຂອງພວກເຂົາສຳລັບເຫດຜົນເຊັ່ນ:

- ການເຈັບປ່ວຍທາງຈິດ ຫຼື ທາງກາຍຂອງພະນັກງານ, ການປິ່ນປົວ ຫຼື ດູແລການປ້ອງກັນ;
- ການເຈັບປ່ວຍທາງຈິດ ຫຼື ທາງກາຍຂອງສະມາຊິກໃນຄອບຄົວ, ການປິ່ນປົວ ຫຼື ດູແລການປ້ອງກັນ;
- ການຂາດງານ ເນື່ອງຈາກການລ່ວງລະເມີດພາຍໃນຄອບຄົວ, ຂົ່ມຂືນທາງເພດ ຫຼື ຕິດຕາມພະນັກງານ ຫຼື ສະມາຊິກໃນຄອບຄົວ;
- ການປິດສະຖານທີ່ເຮັດວຽກຂອງພະນັກງານ ເນື່ອງຈາກສະພາບອາກາດ ຫຼື ພາວະສຸກເສີນສາທາລະນະ ຫຼື ການປິດໂຮງຮຽນ ຫຼື ສະຖານທີ່ດູແລຂອງສະມາຊິກຄອບຄົວ ເນື່ອງຈາກສະພາບອາກາດ ຫຼື ພາວະສຸກເສີນສາທາລະນະ; ແລະ
- ເມື່ອມີການກຳນົດໂດຍເຈົ້າໜ້າທີ່ສາທາລະນະສຸກ ຫຼື ຜູ້ຊ່ຽວຊານດ້ານການດູແລສຸຂະພາບວ່າ ພະນັກງານ ຫຼື ສະມາຊິກໃນຄອບຄົວມີຄວາມສ່ຽງທີ່ຈະຕິດເຊື້ອຜູ້ອື່ນເປັນພະຍາດຕິດຕໍ່.

## ສະມາຊິກຄອບຄົວໃດແດ່ຖືກລວມເຂົ້າດ້ວຍ?

ພະນັກງານອາດຈະສາມາດນຳໃຊ້ເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພກັບສະມາຊິກຄອບຄົວຕໍ່ໄປນີ້:

1. ລູກຂອງພວກເຂົາ, ລວມທັງເດັກທີ່ຮັບມາລ້ຽງ, ລູກທີ່ເປັນຜູ້ໃຫຍ່, ເດັກທີ່ມອບໝາຍໃຫ້ດູແລຕາມກົດໝາຍ, ເດັກທີ່ພະນັກງານເປັນຜູ້ປົກຄອງຖືກຕ້ອງຕາມກົດໝາຍ ຫຼື ເດັກທີ່ພະນັກງານໃຫ້ການດູແລໃນຕຳແໜ່ງພໍ່ແມ່ (ແທນພໍ່ແມ່);
2. ຄູ່ສົມລົດ ຫຼື ຄູ່ຮ່ວມຊີວິດພາຍໃນຄອບຄົວທີ່ລົງທະບຽນຂອງພວກເຂົາ;
3. ອ້າຍເອື້ອຍນ້ອງ, ອ້າຍເອື້ອຍນ້ອງທີ່ບໍ່ຮ່ວມສາຍເລືອດ ຫຼື ອ້າຍເອື້ອຍນ້ອງທີ່ນຳເອົາມາລ້ຽງເປັນລູກບຸນທຳຂອງພວກເຂົາ;
4. ພໍ່ແມ່ສາຍເລືອດດຽວກັນ, ພໍ່ແມ່ລ້ຽງ ຫຼື ພໍ່ແມ່ບຸນທຳ, ພໍ່ແມ່ທີ່ບໍ່ແມ່ນສາຍເລືອດດຽວກັນຂອງພວກເຂົາ ຫຼື ຜູ້ທີ່ຢູ່ໃນຕຳແໜ່ງພໍ່ແມ່ (ແທນພໍ່ແມ່) ເມື່ອພະນັກງານເປັນລູກ;
5. ຫຼານ, ເດັກທີ່ນຳເອົາມາລ້ຽງເປັນຫຼານ ຫຼື ຫຼານທີ່ບໍ່ແມ່ນສາຍເລືອດດຽວກັນຂອງພວກເຂົາ;
6. ພໍ່ເຖົ້າແມ່ເຖົ້າ ຫຼື ພໍ່ເຖົ້າແມ່ເຖົ້າທີ່ບໍ່ແມ່ນສາຍເລືອດດຽວກັນຂອງພວກເຂົາ;
7. ລູກຂອງອ້າຍເອື້ອຍນ້ອງຂອງພະນັກງານ;
8. ອ້າຍເອື້ອຍນ້ອງຂອງພໍ່ແມ່ພະນັກງານ;
9. ລູກຂອງລູກໃພ້/ລູກເຂີຍ ຫຼື ພີ່ນ້ອງຂອງລູກໃພ້/ລູກເຂີຍ
10. ສະມາຊິກຄອບຄົວໃດໜຶ່ງທີ່ລະບຸໄວ້ໃນ 1 ເຖິງ 9 ຂ້າງເທິງ ຂອງຄູ່ສົມລົດຂອງພະນັກງານ ຫຼື ຄູ່ຮ່ວມຊີວິດພາຍໃນຄອບຄົວທີ່ຈົດທະບຽນ;
11. ບຸກຄົນອື່ນໆທີ່ກ່ຽວຂ້ອງກັບສາຍເລືອດ ຫຼື ຜູ້ທີ່ມີຄວາມສຳພັນໃກ້ຊິດກັບພະນັກງານທຽບເທົ່າກັບຄວາມສຳພັນໃນຄອບຄົວ;
12. ສູງສຸດໜຶ່ງຄົນຕໍ່ປີທີ່ພະນັກງານກຳນົດ.

— ເພີ່ມເຕີມ —

# ເວລາລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພທີ່ໄດ້ຮັບໃນ ວັນທີ 1 ມັງກອນ 2024

## ນາຍຈ້າງມີຄວາມຮັບຜິດຊອບເພີ່ມເຕີມຕໍ່ເວລາລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພແນວໃດ?

ນອກເໜືອໄປຈາກການໃຫ້ພະນັກງານຂອງພວກເຂົາມີລາພັກທີ່ໄດ້ຮັບຄ່າຈ້າງໜຶ່ງຊົ່ວໂມງຂອງທຸກໆ 30 ຊົ່ວໂມງທີ່ໄດ້ເຮັດວຽກ, ຢ່າງໜ້ອຍສູງເຖິງປີລະ 48 ຊົ່ວໂມງແລ້ວ, ນາຍຈ້າງຈຳເປັນຕ້ອງ:

- ລວມເອົາຈຳນວນຊົ່ວໂມງເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພທັງໝົດທີ່ເພີ່ມຂຶ້ນ ແລະ ມີໃຫ້ນຳໃຊ້, ຕະຫຼອດຈົນເຖິງຈຳນວນຊົ່ວໂມງເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພທັງໝົດທີ່ໄດ້ນຳໃຊ້, ຢູ່ໃນຖະແຫຼງການລາຍຮັບທີ່ສະໜອງໃຫ້ພະນັກງານໃນຕອນທ້າຍຂອງແຕ່ລະໄລຍະການຈ່າຍເງິນ;
- ແຈ້ງໃຫ້ພະນັກງານພາຍໃນ ວັນທີ 1 ມັງກອນ 2024 — ຫຼື ໃນຕອນເລີ່ມຕົ້ນການຈ້າງງານ, ອັນໃດມາເຖິງໃນພາຍຫຼັງ — ເປັນພາສາອັງກິດ ແລະ ເປັນພາສາຫຼັກຂອງພະນັກງານ ຖ້າສິ່ງນັ້ນບໍ່ແມ່ນພາສາອັງກິດ, ທີ່ແຈ້ງໃຫ້ພວກເຂົາຮັບຊາບກ່ຽວກັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພ; ແລະ
- ລວມເອົາແຈ້ງການເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພໄວ້ໃນປຶ້ມຄູ່ມືພະນັກງານ, ຖ້ານາຍຈ້າງມີປຶ້ມຄູ່ມືພະນັກງານ.

ພະແນກແຮງງານ ແລະ ອຸດສາຫະກຳຂອງ Minnesota ຈະກະກຽມແຈ້ງການພະນັກງານເປັນເອກະພາບທີ່ນາຍຈ້າງສາມາດນຳໃຊ້ໄດ້ ແລະ ຈະເຮັດໃຫ້ມີເປັນຫ້າພາສາທີ່ມັກໃຊ້ຢູ່ໃນ Minnesota.

## ຄຳສັ່ງທ້ອງຖິ່ນກ່ຽວກັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພໃນປະຈຸບັນ

ຄຳສັ່ງທ້ອງຖິ່ນກ່ຽວກັບເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພມີຢູ່ແລ້ວໃນເມືອງ Bloomington, Duluth, Minneapolis ແລະ St. Paul, Minnesota. ເມື່ອກົດໝາຍວ່າດ້ວຍເວລາພັກເຈັບປ່ວຍ ແລະ ເພື່ອຄວາມປອດໄພທົ່ວລັດ Minnesota ເລີ່ມມີຜົນບັງຄັບໃຊ້ໃນ ວັນທີ 1 ມັງກອນ 2024 ເປັນຕົ້ນໄປ, ນາຍຈ້າງຕ້ອງປະຕິບັດຕາມກົດໝາຍປົກປ້ອງສູງສຸດທີ່ໃຊ້ກັບລູກຈ້າງຂອງພວກເຂົາ.



**ເວລາພັກເຈັບປ່ວຍ**
ສຳລັບເງື່ອນໄຂສຸຂະພາບທາງດ້ານຮ່າງກາຍ ຫຼື ທາງດ້ານຈິດໃຈ, ການເຈັບປ່ວຍ ຫຼື ການບາດເຈັບ



**ເວລາພັກເພື່ອຄວາມປອດໄພ**
ເພື່ອແກ້ໄຂການລ່ວງລະເມີດພາຍໃນຄອບຄົວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມ

DEPARTMENT OF LABOR AND INDUSTRY
Labor Standards • 443 Lafayette Road N. • St. Paul, MN 55155
651-284-5075 • 800-342-5354 • dli.mn.gov • dli.laborstandards@state.mn.us

ໝາຍເຫດ: ນີ້ແມ່ນບົດສະຫຼຸບສັ້ນໆຂອງກົດໝາຍ Minnesota. ມັນມີຈຸດປະສົງເປັນຄູ່ມື ແລະ ບໍ່ໄດ້ຖືເປັນການໃຊ້ແທນລັດຖະບັນຍັດຂອງ Minnesota ກ່ຽວກັບການລາພັກເຈັບປ່ວຍ ແລະ ການລາພັກເພື່ອຄວາມປອດໄພ.

Version 060723